**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 4046/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 22/12/2023

# <u>ໃບລາຍງານ</u>

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 3/2023.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມິຖຸນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ **3/2023** ວັນທີ **21 ທັນວາ 2023**, ມີລາຍລະອຽດລຸ່ມນີ້:

1. ຮັບຮອງການແຕ່ງຕັ້ງຄະນະຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອປ່ຽນແທນຄະນະຜູ້ອຳນວຍການໃຫຍ່ຜູ້ເກົ່າ ທີ່ໄດ້ໄປຮັບໜ້າທີ່ໃໝ່ ແລະ ພັກການຮັບອຸດໜູນບຳເນັດຄື:

**1)** ແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ 02 ທ່ານ ຊຶ່ງມີລາຍຊື່ດັ່ງນີ້:

(1). **ທ່ານ ປອ. ບຸນແທນ ຈັນສະໄໝ** ຜູ້ອຳນວຍການຝ່າຍພັດທະນາທຸລະກິດ ເປັນຮອງຜູ້ອຳນວຍການໃຫຍ່;

(2). **ທ່ານ ດາວວຽງ ສຸມັນທະລາດ** ຜູ້ອຳນວຍການຝ່າຍເຕັກນິກ EDL-Gen O&M ເປັນຮອງຜູ້ອຳນວຍການໃຫຍ່.

**2).** ຍົກຍ້າຍ ແລະ ແຕ່ງຕັ້ງ **ທ່ານ ວັນແສງ ວັນນະວົງ** ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໄປເປັນຮອງຜູ້ອຳນວຍການ ລັດວິສາຫະກິດຖືຮຸ້ນລາວ.

**3).** ອະນຸມັດໃຫ້ **ທ່ານ ນາງ ສຸກສັນ ພົງພິລາ** ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ພັກການຮັບອຸດໜູນບຳເນັດ ຕາມກົດໝາຍ ແລະ ລະບຽບການ.

ແລະ ໃຫ້ນຳສະເໜີເລື່ອງດັ່ງກ່າວຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອຮັບຮອງ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**<u>ປະທານສະພາບໍລິຫານ</u>**

ສຸລິວັດ ສຸວັນນະຈູມຄຳ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la